ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ.19./ຈຂ.ຊຂ

ລົງວັນທີ.27/11./2015

# ຄຳສັ່ງແນະນຳ

## ວ່າດ້ວຍ ການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ

**ເຖິງ: ບັນດາທ່ານ ຫົວໜ້າພະແນກການ, ກອງບັນຊາການ ປກສ-ປກຊ, ທ່ານເຈົ້າເມືອງ ທຸກໆເມືອງ, ຫົວໜ່ວຍທຸລະກິດ ແລະ ການຈັດຕັ້ງບ້ານ.**

**ເລື່ອງ: ການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໃນທົ່ວແຂວງຊຽງຂວາງ.**

- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007
- ອີງຕາມ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 32/ນຍ, ລົງວັນທີ 06/03/2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້

ໃນໄລຍະທີ່ຜ່ານມາ ກໍ່ຄືປະຈຸບັນ ການຄຸ້ມຄອງຊັບພະຍາກອນປ່າໄມ້ ໃນຂອບເຂດທົ່ວແຂວງ ເຫັນວ່າຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ ເຊິ່ງສະແດງອອກ ຍັງມີບາງພະແນກການ ອອກອະນຸຍາດ ໃຫ້ແກ່ບຸກຄົນ, ນັກທຸລະກິດ, ບໍລິສັດ ສ້າງເສັ້ນທາງ ເຂົ້າໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ, ມີການອະນຸຍາດໃຫ້ເກັບກູ້ໄມ້, ຂຸດຄົ້ນໄມ້, ລ່າສັດນ້ຳ-ສັດປ່າ, ການສ້າງຕັ້ງໂຮງເລື່ອຍ, ໂຮງງານເຟີນີເຈີ, ການເຊົ່າ, ການສຳປະທານທີ່ດິນ ແລະ ຈັບຈອງທີ່ດິນ ຢູ່ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນໂດຍບໍ່ສອດຄ່ອງກັບລະບຽບກົດໝາຍ ທີ່ວາງອອກ.

ສະນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງຕະຫຼອດໄປ ພ້ອມທັງເປັນການປະກອບສ່ວນເຂົ້າໃນແຜນພັດທະນາ ເສດຖະກິດ ແລະ ສັງຄົມ ຂອງແຂວງຊຽງຂວາງໃຫ້ເກີດຜົນປະໂຫຍດສູງສຸດ ບໍ່ວ່າທາງກົງ ແລະ ທາງອ້ອມ, ບໍ່ໃຫ້ຊັບພະຍາກອນປ່າໄມ້ຖືກທຳລາຍ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມ.

## ເຈົ້າແຂວງ ແຂວງຊຽງຂວາງ ອອກຄຳສັ່ງແນະນຳ ດັ່ງນີ້:

1. ມອບໃຫ້ພະແນກການ, ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງແຕ່ລະເມືອງ ເອົາໃຈໃສ່ເພີ່ມທະວີການຄຸ້ມຄອງຊັບພະຍາກອນປ່າໄມ້ ໂດຍສະເພາະໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ, ໂດຍປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 32/ນຍ, ລົງວັນທີ 06/03/2012 ວ່າດ້ວຍ ການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ໃນທົ່ວປະເທດ, ຂໍ້ຕົກລົງຂອງເຈົ້າແຂວງ ແຂວງຊຽງຂວາງ ສະບັບເລກທີ 139/ຈຂ.ຊຂ, ລົງວັນທີ 16/03/2011, ວ່າດ້ວຍການກຳນົດ, ການຄຸ້ມຄອງ,

ການປົກປັກຮັກສາ ແລະ ນຳໃຊ້ປ່າປ້ອງກັນຍອດນ້ຳແບບຍືນນານ ແລະ ຕາມບົດບັນທຶກມອບ-ຮັບວຽກງານການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ລະຫ່ວາງ ພະແນກອຸດສາຫະກຳ-ການຄ້າ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກກະສິກຳ ແລະ ປ່າໄມ້ ໃນຄັ້ງວັນທີ 20 ເມສາ 2012.

**2.** ໃຫ້ພະແນກການ, ຂະແໜງການ ແລະ ບັນດາເມືອງ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ແລະ ປຸກລະດົມປະຊາຊົນ ໃຫ້ເປັນເຈົ້າການ ເຂົ້າມາມີສ່ວນຮ່ວມໃນການຄຸ້ມຄອງ ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ປັບປຸງຍົກສູງຊີວິດການເປັນຢູ່ຂອງປະຊາຊົນ, ດ້ວຍການວາງແຜນ ແລະ ຈັດສັນປ່າໄມ້ ໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້ລວມທັງການປູກ ແລະ ການນຳໃຊ້ເຄື່ອງປ່າຂອງດົງ, ພືດເປັນຢາ ແລະ ອື່ນໆ ແບບຍືນຍົງ ເພື່ອການໃຊ້ສອຍ ແລະ ສ້າງລາຍຮັບໃຫ້ປະຊາຊົນບັນດາເຜົ່າ ມີຢູ່ມີກິນ, ລຶກລ້ຽງການນຳໃຊ້ໄມ້ເປັນສິນຄ້າ ທີ່ຈະເປັນການດັບສູນ ແລະ ສິ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ.

**3.** ວຽກງານຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໃນທົ່ວແຂວງ ແມ່ນມອບໃຫ້ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແຕ່ລະເມືອງມີໜ້າທີ່ຄຸ້ມຄອງຢ່າງຂາດຕົວ ແລະ ພັດທະນາຮອບດ້ານໃຫ້ມີຄວາມເຂັ້ມງວດ.

- ວຽກງານຄຸ້ມຄອງປ່າຜະລິດແຫ່ງຊາດ ແມ່ນມອບໃຫ້ພະແນກກະສິກາ ແລະ ປ່າໄມ້ ມີໜ້າທີ່ຄຸ້ມຄອງ ແລະ ພັດທະນາຮອບດ້ານໃຫ້ເຂັ້ມງວດ.

**4.** ຫ້າມບໍ່ໃຫ້ອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກພາກສ່ວນ ອະນຸຍາດໃຫ້ບຸກຄົນ, ບໍລິສັດຕ່າງໆ ສ້າງທາງທຸກປະເພດ ເຂົ້າໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ຖ້າພາກສ່ວນໃດຫຼືບຸກຄົນໃດຫາກລະເມີດຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

- ໃນກໍລະນີທີ່ ໄດ້ມີການອະນຸຍາດ ໃຫ້ບັນດາບໍລິສັດລົງມືກໍ່ສ້າງ ໃນໄລຍະຜ່ານມາ ຖ້າເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບການພັດທະນາຊຸມຊົນ ແມ່ນໃຫ້ລົບລ້າງ.

- ຫ້າມບໍ່ໃຫ້ບັນດາເມືອງ ເອົາຊັບພະຍາກອນປ່າໄມ້ແລກປ່ຽນ ຫຼື ສຳລະບັນດາກິດຈະການ ໃນການກໍ່ສ້າງໂຄງລ່າງພື້ນຖານຂອງເມືອງຢ່າງເດັດຂາດ.

**5.** ຫ້າມບໍ່ໃຫ້ບັນດາເມືອງ, ຂະແໜງການ ແລະ ພະແນກການ ທີ່ກ່ຽວຂ້ອງຂັ້ນແຂວງອອກເອກະສານອະນຸຍາດຕ່າງໆ ທີ່ກ່ຽວພັນກັບການ ເກັບກູ້ໄມ້, ຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ການລ່າ, ການຊື້-ຂາຍ ສັດນ້ຳ-ສັດປ່າ ລວມທັງການສຳຫຼວດຂຸດຄົ້ນ, ການຂຸດຄົ້ນບັນດາແຮ່ທາດຕ່າງໆ ໃຫ້ແກ່ບຸກຄົນ, ການຈັດຕັ້ງ, ຫົວໜ່ວຍທຸລະກິດໄມ້ ແລະ ບັນດາບໍລິສັດຕ່າງໆ ຢູ່ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ຢ່າງເດັດຂາດ.

- ສ່ວນເອກະສານທີ່ລັດໄດ້ຕົກລົງ ແລະ ອະນຸມັດໃຫ້ບໍລິສັດ, ບຸກຄົນ ກ່ຽວກັບການອະນຸຍາດໃຫ້ເກັບກູ້ໄມ້,ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ເຂດປ່າສະຫງວນ ແລະ ປ່າປ້ອງກັນ ໃນສົກປີທີ່ຜ່ານມາ ແມ່ນໃຫ້ລົບລ້າງທັງໝົດ.

- ຖ້າກວດກາພົບເຫັນ ປະກົດການ ທີ່ມີການລະເມີດ ການລັກລອບເກັບກູ້ໄມ້, ຂຸດຄົ້ນໄມ້ ແລະ ການຕັດໄມ້ທຳລາຍປ່າ, ການຖາງປ່າເຮັດໄຮ່ເລື່ອນລອຍ ໃຫ້ໃຊ້ມາດຕາການ ສະກັດກັ້ນ ແລ້ວລາຍງານອຳນາດການປົກຄອງແຂວງ ເພື່ອມີທິດຊີ້ນຳ ໃນການແກ້ໄຂໃຫ້ ທັນກັບເວລາ.

**6.** ຫ້າມບໍ່ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ບັນດານັກທຸລະກິດ ແລະ ພໍ່ແມ່ປະຊາຊົນ ບັນດາເຜົ່າເຄື່ອນໄຫວລ່າສັດນ້ຳ-ສັດປ່າຢູ່ໃນເຂດປ່າທຸກປະເພດ ແລະ ຫ້າມວາງຂາຍສັດນ້ຳ-ສັດປ່າປະເພດຫວງຫ້າມ ຢູ່ຕາມຕະຫຼາດ ແລະ

ສະຫານທີ່ສາທາລະນະຕ່າງໆ. ລວມທັງວິທີການຈັບນົກທຸກຊະນິດ, ການໃຊ້ໄຟຟ້າຊັອດປາ, ການໃຊ້ລະເບີດຍິງປາ ແລະ ການໃຊ້ສານເຄມີຕ່າງໆເບືອປາ ຢູ່ຕາມສາຍນໍ້າ, ຫ້ວຍນໍ້າ, ອ່າງນໍ້າ, ໜອງ, ບຶງຕ່າງໆ ທີ່ເປັນຂອງສາທາລະນະ ແລະ ຂອງບຸກຄົນ ຢູ່ໃນທົ່ວແຂວງຊຽງຂວາງ.

- ຖ້າມີການລະເມີດຄືດັ່ງກ່າວແມ່ນໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງສຶກສາອົບຮົມ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.

7. ຖ້າພະແນກການໃດ ຫຼື ເມືອງໃດໜຶ່ງ ເຫັນວ່າມີຄວາມຈຳເປັນ ທີ່ຈະຕ້ອງໄດ້ມີການປຸກສ້າງ ບັນດາກິດຈະການໃດໜຶ່ງ ເຊິ່ງເຫັນວ່າຈະຕ້ອງໄດ້ນຳໃຊ້ໄມ້ ເຂົ້າໃນການກໍ່ສ້າງແຂວງຈະຄົ້ນຄ້ວາ ພິຈາລະນາອະນຸຍາດ ໃຫ້ເກັບກູ້ໄມ້, ຂຸດຄົ້ນໄມ້ ຢູ່ໃນເຂດປ່າຜະລິດ ທີ່ໄດ້ຜ່ານການສຳຫຼວດ, ຈັດສັນແລ້ວນັ້ນ ແລະ ເພື່ອເຮັດໃຫ້ການອະນຸຍາດນັ້ນຖືກຕ້ອງຕາມເປົ້າໝາຍ, ບໍ່ແຕະຕ້ອງເຖິງປ່າສະຫງວນ ແລະ ປ່າປ້ອງກັນ ຕ້ອງໄດ້ປະສານສົມທົບ ກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ລົງສຳຫຼວດ ເກັບກຳຂໍ້ມູນຕົວຈິງ ແລ້ວລາຍງານໃຫ້ແຂວງ ເພື່ອອະນຸມັດ ຕາມຄວາມເໝາະສົມ.

- ຖ້າເຫັນວ່າຍັງມີໄມ້ແປຮູບ, ໄມ້ທ່ອນ ທີ່ຕົກຄ້າງຢູ່ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ໃນສົກປີຜ່ານມານັ້ນ ແມ່ນມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນຜູ້ກວດກາວັດແທກ, ເກັບກຳຂໍ້ມູນ ເພື່ອລາຍງານໃຫ້ຂັ້ນເທິງຮັບຊາບ ແລະ ດຳເນີນຄະດີຕໍ່ຜູ້ລະເມີດຕາມລະບຽບກົດໝາຍ.

8. ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງ ປະສານສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງ, ກອງບັນຊາການ ປກຊ-ປກສ, ອຳນາດການປົກຄອງເມືອງ ແຕ່ລະເມືອງ ແລະ ການຈັດຕັ້ງບ້ານ ເພື່ອເອົາໃຈໃສ່ຄຸ້ມຄອງປົກປັກຮັກສາປ່າສະຫງວນ ແລະ ປ່າປ້ອງກັນ ໃຫ້ມີຄວາມເຂັ້ມງວດ.

ດັ່ງນັ້ນ, ເຈົ້າແຂວງ ແຂວງຊຽງຂວາງ ຈຶ່ງໄດ້ອອກຄຳສັ່ງແນະນຳ ສະບັບນີ້ ເຖິງບັນດາພະແນກການ, ກອງບັນຊາການ ປກຊ-ປກສ, ເຈົ້າເມືອງ ທຸກໆເມືອງ, ບັນດາບໍລິສັດ, ຫົວໜ່ວຍທຸລະກິດ, ການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຄຳສັ່ງແນະນຳສະບັບນີ້ ຢ່າງເຂັ້ມງວດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ຮອງ ທ່ານ ເຈົ້າແຂວງ, ແຂວງຊຽງຂວາງ

ບົວສອນ ສີບວນທອງ